Learning from home in case of school closures

Information for parents and carers

# ການຮຽນຢູ່ເຮືອນໃນກໍຣະນີທີ່ໂຮງຮຽນຖືກປິດ

## ຂໍ້ມູນສໍາລັບບັນດາພໍ່ແມ່ ແລະ ຜູ້ດູແລ

ຖ້າໂຮງຮຽນຂອງລູກທ່ານຕ້ອງຖືກປິດ ທາງໂຮງ ຮຽນຈະຕິດຕໍ່ກັບບັນດາຄອບຄົວໂດຍຜ່ານທາງສື່ສານທີ່ໃຊ້ ຕິດຕໍ່ຕາມປົກກະຕິ (ອັນນີ້ອາດຈະແມ່ນ ທາງ ອີເມລ໌, SMS, ເວັບໄຊຕ໌).

ຖ້າໂຮງຮຽນປິດເປັນເວລາຍາວ ທາງໂຮງຮຽນຈະສືບຕໍ່ຈັດຫາກິຈກັມການຮຽນເພື່ອໃຫ້ລູກຂອງທ່ານເຮັດກິຈກັມຢູ່ເຮືອນ ແລະ ຈະສື່ສານກັບທ່ານກ່ຽວກັບການຮຽນຂອງພວກເຂົາ.

ຢູ່ໃນຫຼາຍໂຮງຮຽນທົ່ວຣັດ ບັນດາຄູໄດ້ຈັດສິ່ງ ແລະ ຈັດຫາ ກິຈກັມການຮຽນໂດຍນໍາໃຊ້ເຄື່ອງ ມືທາງອອນໄລນ໌ ຢູ່ແລ້ວ. ບາງໂຮງຮຽນອາດຈະຍ້າຍກິຈກັມການຮຽນຂອງລູກທ່ານຫຼາຍຂຶ້ນ ຫຼື ຍ້າຍກິຈກັມທັງ ໝົດໄປທາງອອນໄລນ໌. ອັນນີ້ອາດຈະຮວມເຖິງບົດຮຽນແບບສອນສົດໆ. ຖ້າທ່ານ ຫຼື ໂຮງຮຽນຂອງທ່ານບໍ່ ມີທາງເລືອກທາງດິຈິຕອລ ຫຼື ທາງອອນໄລນ໌ ພວກເຂົາກໍຈະນໍາໃຊ້ວິທີບໍ່ແມ່ນດິຈິຕອລ. ສິ່ງນີ້ແມ່ນ ຮວມ ເຖິງການສົ່ງເຈັ້ຍເຮັດວຽກ, ປຶ້ມແບບຮຽນຫລື USB ທີ່ບັນຈຸແຜ່ນເຈັ້ຍເຮັດວຽກແບບດິຈິຕອລແລະວີດີໂອໄປຍັງເຮືອນຂອງທ່ານໄປກັບລູກຫຼືຜ່ານທາງໄປສະນີ.

ນອກຈາກນີ້ ບັນດາຄູຍັງຈະຕິດຕໍ່ບັນດານັກຮຽນ ເປັນກຸ່ມ ຫຼື ແບບຕົວຕໍ່ຕົວທາງໂທຣະສັບ.

ເຈັ້ຍຂໍ້ມູນນີ້ຈະຊ່ວຍທ່ານໃຫ້ເຂົ້າໃຈວ່າຈະຊ່ວຍລູກທ່ານຮຽນຢູ່ເຮືອນໄດ້ຢ່າງໃດ ຮວມເຖິງ:

- ຄວາມຮັບຜິດຊອບຂອງທ່ານ - ມີຫຼາຍຢ່າງທີ່ທ່ານຕ້ອງເຮັດເພື່ອຊ່ວຍລູກທ່ານຮຽນຢູ່ເຮືອນ ເຊັ່ນການ ກໍານົດລະບຽບ, ຊອກຫາສະຖານທີ່ທີ່ງຽບສງົບແລະຖາມວ່າການຮຽນຂອງພວກເຂົາມີຄວາມກ້າວໜ້າ ແນວໃດ.
- ຄວາມຮັບຜິດຊອບຂອງລູກທ່ານ - ລູກຂອງທ່ານຍັງຕ້ອງປະຕິບັດຕາມລະບຽບທີ່ຕັ້ງຂຶ້ນສໍາລັບພວກເຂົາ ແລະ ເຮັດວຽກທີ່ຄູມອບໃຫ້ຈົນເສັດຮຽບຮ້ອຍໃນຂະນະທີ່ເຮັດວຽກຂອງພວກເຂົາໃຫ້ດີທີ່ສຸດ.
- ຈະວາງແຜນມື້ຂອງພວກເຂົາຢ່າງໃດ - ໂຮງຮຽນຂອງທ່ານຄວນຈະໃຫ້ບາງຄໍາແນະນໍາ ແລະ ຄໍາຊີ້ແນະແກ່ທ່ານວ່າລູກທ່ານຄວນຈະເຮັດຫຍັງພາຍໃນແຕ່ລະມື້.
- ດູແລຄວາມຢູ່ດີຂອງພວກເຂົາ - ທ່ານຈະຕ້ອງແນ່ໃຈວ່າພວກເຂົາມີເວລາພັກຜ່ອນ, ດື່ມນໍ້າແລະບໍ່ມີຄວາມຕຶງຄຽດຫລືກັງວົນໃຈ.
- ການສື່ສານ - ມັນຈະເປັນສິ່ງສໍາຄັນທີ່ທ່ານໂອ້ລົມກັບລູກຂອງທ່ານສມໍ່າສເມີກ່ຽວກັບການຮຽນຂອງພວກເຂົາ. ຄູ ແລະ/ຫຼື ໂຮງຮຽນຂອງລູກທ່ານຈະສື່ສານກັບທ່ານ ແລະ ບອກທ່ານວ່າທ່ານຈະຕິດຕໍ່ກັບພວກເຂົາໄດ້ຢ່າງໃດ.
- ການນໍາໃຊ້ເທັກໂນໂລຢີ ແລະ ເວລາເທິງໜ້າຈໍ - ມັນເປັນສິ່ງສໍາຄັນທີ່ທ່ານຕ້ອງດູແລລູກທ່ານໃຫ້ໃຊ້ເທັກໂນໂລຢີຢ່າງປອດໄພ ແລະ ຈໍາກັດເວລາທີ່ພວກເຂົາໃຊ້ທາງອອນໄລນ໌.

## ບໍຣິການ ນາຍພາສາ ທາງໂທຣະສັບ

ຖ້າທ່ານຂໍ້ມູນເພີ້ມຕື່ມ ກະຣຸນາໂທຫາທ່ານຄູໃຫຍ່ຂອງໂຮງຮຽນຂອງທ່ານ. ຖ້າທ່ານຕ້ອງການນາຍພາສາເພື່ອຊ່ວຍທ່ານໃນການສອບຖາມຂອງທ່ານ, ກະຣຸນາໂທຫາ ບໍຣິການນາຍພາສາ ທາງໂທຣະສັບຕາມໝາຍເລກ 13 14 50 ແລະຂໍເອົານາຍພາສາລາວ. ທ່ານບໍ່ຕ້ອງເສັຍຄ່າບໍຣິການນີ້.



NSW GOVERNMENT